

# Pandemic EBT
## ສຳລັບປີໂຮງຮຽນ 2020-21 ກຳລັງຈະມາຮອດໃນໄວໆນີ້!

### ການຊ່ວຍເຫລືອ Pandemic EBT ຫລື P-EBT ແມ່ນຫຍັງ?

ຍ້ອນໂຣກ COVID-19, ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຄາບອາຫານຂອງໂຮງຮຽນຟຣີຫລືລຸດຣາຄາຈະໄດ້ຮັບການຊ່ວຍເຫລືອອາຫານເພີ້ມເຕີມອີກ. ການຊ່ວຍເຫລືອອາຫານອັນນີ້ໄດ້ຖືກເອີ້ນວ່າ P-EBT.ການຊ່ວຍເຫລືອ P-EBT ຈະຊ່ວຍຄອບຄົວຂອງຣັດວໍຊິງຕັນຊື້ເອົາ ອາຫານ ເມື່ອເວລາໂຮງຮຽນໄດ້ປິດ ຫລືມີການເຂົ້າໂຮງຮຽນໂດຍນັກຮຽນລຸດລົງ.

### ແມ່ນໃຜແດ່ມີເງື່ອນໄຂໄດ້ຮັບ?

ເດັກນ້ອຍມີເງື່ອນໄຂໄດ້ຮັບການຊ່ວຍເຫລືອ P-EBT ຖ້າຫາກວ່າ:

- ໂຮງຮຽນຂອງເຂົາເຈົ້າໄດ້ຖືກປິດຫລືຊົ່ວໂມງໄປໂຮງຮຽນໂດຍຕົນເອງຖືກລຸດລົງ.
- ເຂົາເຈົ້າມີເງື່ອນໄຂໄດ້ຮັບຄາບອາຫານໂຮງຮຽນຟຣີຫລືລຸດຣາຄາ.

### ຄອບຄົວຈະຮ້ອງຂໍເອົາໄດ້ແນວໃດ?

ຂ່າວດີ: ຄອບຄົວບໍ່ຕ້ອງໄດ້ຮ້ອງຂໍເອົາໂຄງການ P-EBT! ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບຄາບອາຫານໂຮງຮຽນຟຣີຫລືລຸດຣາຄາ, ເຂົາເຈົ້າຈະມີສິດໄດ້ຮັບໂດຍອັດຕະໂນມັດໂລດ. ຄອບຄົວຈະຕ້ອງໄດ້ໃຫ້ແນ່ໃຈວ່າທີ່ຢູ່ໄປສະນີປັດຈຸບັນຂອງເຂົາເຈົ້າມີຢູ່ໃນສຳມວນນຳໂຮງຮຽນຂອງເດັກນ້ອຍ ແລະຖືກແນະນຳໃຫ້ຂຽນຄຳຮ້ອງຂໍເອົາຄາບອາຫານຂອງໂຮງຮຽນຖ້າຫາກວ່າລູກຂອງເຂົາເຈົ້າ ຍັງບໍ່ທັນໄດ້ຮັບຄາບອາຫານໂຮງຮຽນຟຣີຫລືລຸດຣາຄາເທື່ອ.

### ຄອບຄົວຈະໄດ້ຮັບເທົ່າໃດ?

ຈຳນວນຂອງການຊ່ວຍເຫລືອແຕກຕ່າງກັນຂຶ້ນນຳແບບຮ່າງການຮຽນຮູ້ຂອງໂຮງຮຽນຂອງເດັກນ້ອຍຂອງເຂົາເຈົ້າສຳລັບເດືອນໃດເດືອນນຶ່ງ. ຈຳນວນຂອງການຊ່ວຍເຫລືອປະຈຳເດືອນຈະຫ່າງກັນຈາກ $25 ໄປຫາ $123.

### ບັດ P-EBT ຈະມີຮູບຮ່າງແບບໃດ?

ຈອບເບິ່ງຫນັງສືໄປສະນີເບິ່ງບັດທີ່ຄ້າຍຄືກັບອັນນີ້! ບັດ P-EBT ແມ່ນຕ່າງຈາກ ແລະບໍ່ໃຊ້ແທນບັດ (Quest) EBT ອາຫານ ຫລືເງິນສົດ.




### ບັດ P-EBT ຈະມາຮອດຍາມໃດ?

ເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບຄວນຈະຄາດວ່າຈະໄດ້ຮັບໃບແຈ້ງການໃນທ້າຍຂອງເດືອນມາກຊ໌, ຊຶ່ງຈະມີລາຍລະອຽດເພີ້ມເຕີມອີກ. ບັດ P-EBT ຈະຖືກສົ່ງມາຕ່າງຫາກໃນອາທິດຕໍ່ມາ.

### ບັດ P-EBT ຈະຖືກໃຊ້ໄດ້ແນວໃດ?

ບັດ P-EBT ສາມາດຖືກໃຊ້ໄດ້ຄ້າຍຄືກັນກັບບັດເດບິດຄາດເພື່ອຈະຊື້ເອົາອາຫານຢູ່ຕາມຮ້ານ ຂາຍອາຫານທົ່ວໄປແລະ ຕະລາດຊາວນາ, ຫລືເພື່ອຈະຊື້ເອົາອາຫານທາງອອນລາຍນ໌ຢູ່ຕາມ Amazon ຫລື Walmart.

### ຄອບຄົວຈະໄດ້ຮັບບັດ P-EBT ໃບໃຫມ່ທຸກໆ ເດືອນບໍ່?

ບໍ່, ຄອບຄົວຄວນຈະຮັກສາບັດ P-EBT ຂອງເດັກນ້ອຍແຕ່ລະຄົນໄວ້. ການເບີກອອກໃຫ້ເທື່ອທຳອິດຈະລວມເອົາການຊ່ວຍເຫລືອສຳລັບເວລາເລີ້ມຕົ້ນຂອງປີເຂົ້າໂຮງຮຽນ 2020-21 ໄປຮອດເດືອນແຈນຢູຣີ 2021. ການຊ່ວຍເຫລືອເພີ້ມເຕີມຈະຖືກເບີກອອກໃຫ້ໃສ່ບັດທຸກໆສອງເດືອນໄປຮອດທ້າຍຂອງປີເຂົ້າໂຮງຮຽນສຳລັບນານເທົ່ານານທີ່ເຫດການສຸກເສີນ COVID-19 ຕໍ່ສຸຂະພາບຂອງສາທາຣະນະຊົນຍັງດຳເນີນຕໍ່ໄປຢູ່.

ແວ່ປ້ຽມ **dshs.wa.gov/PEBT** ເພື່ອຈະຮູ້ຈັກເພີ້ມເຕີມ!

ຖ້າຫາກວ່າທ່ານຕ້ອງການລາຍລະອຽດອັນນີ້ເປັນພາສາອື່ນ,ໂທຫາສູນກາງຕິດຕໍ່ຂອງ P-EBT ໄດ້ທີ່ **833-518-0282**

ຄອບຄົວຈະຖືກແນະນຳໃຫ້ເຂົ້າຮ່ວມນຳໂຄງການຄາບອາຫານ **Grab-n-Go** ຂອງໂຮງຮຽນເຖິງແມ່ນວ່າເຂົາເຈົ້າຈະມີການຊ່ວຍເຫລືອ P-EBT ແລ້ວກໍຕາມ.

*ສະຖາບັນແຫ່ງນີ້ເປັນບ່ອນບໍຣິການທີ່ໃຫ້ໂອກາດເທົ່າທຽມກັນ.*

Washington State
Department of Social & Health Services
Transforming lives